University of Basel

# Gender and Labour in the Global South

## Article – Laotian

This translation is for a better understanding of the English texts. We are very happy if you join the discussions. Please note that all contributions in the comment section and in the discussion steps need to be in English.

**Impacting the labour market**

**Short description:**
ອ່ານວິທີທີ່ Sony KC ສະຫຼຸບອາທິດທີ 2 ເຊິ່ງຈັດການກັບວຽກງານການດູແລ ແລະ ຜົນກະທົບຂອງມັນໃນວຽກງານທີ່ໄດ້ຮັບຄ່າຈ້າງ ລວມເຖິງບັນດານະໂຍບາຍ ຄວາມອ່ອນໄຫວຕໍ່ເພດ (gender-sensitive) ແລະ ການຕອບສະໜອງຕໍ່ເພດ (gender-responsive).

**Content:**

ໃນອາທິດນີ້ ພວກເຮົາໄດ້ທໍາຄວາມເຂົ້າໃຈວ່າ ເປັນຫຍັງວຽກງານການດູແລຈຶ່ງຖືກແບ່ງເພດ: ນັ້ນກໍຄື, ເປັນຫຍັງແມ່ຍິງເບິ່ງແຍງດູແລຫຼາຍກວ່າຜູ້ຊາຍ ແລະ ປາກົດການນີ້ ສົ່ງຜົນກະທົບຕໍ່ຕະຫຼາດແຮງງານແນວໃດ. ແມ່ຍິງໃຊ້ເວລາໃນວຽກງານການດູແລຫຼາຍຂຶ້ນ, ເຖິງວ່າຈະໄດ້ຮັບຄ່າຈ້າງ ຫຼື ບໍ່ໄດ້ຮັບຄ່າຈ້າງກໍຕາມ, ເຊິ່ງແຍກເຂົາເຈົ້າອອກຈາກຕະຫຼາດແຮງງານ, ເຮັດໃຫ້ລາຍຮັບ ແລະ ຄວາມສາມາດໃນການຫາລາຍໄດ້ຫຼຸດລົງ. ວຽກງານການດູແລ, ຍັງສໍາຄັນເທົ່າເດີມທີ່ເຄີຍເປັນມາ, ຄືໄດ້ຮັບຄວາມສົນໃຈພຽງເລັກໜ້ອຍໃນລະດັບນະໂຍບາຍ. ນີ້ໄດ້ເຮັດໃຫ້ແມ່ຍິງຕົກຢູ່ໃນຂອບເຂດຂອງຄວາມອ່ອນແອ ເນື່ອງຈາກເຂົາເຈົ້າຕ້ອງເພິ່ງພາຜູ້ຊາຍໃນການລ້ຽງຊີບ.

ອົງປະກອບສໍາຄັນອັນໜຶ່ງທີ່ພວກເຮົາສຸມໃສ່ໃນອາທິດນີ້ ແມ່ນການເຂົ້າເຖິງການເງິນ. ພວກເຮົາໄດ້ເບິ່ງບັນຫານີ້ ໂດຍສະເພາະກ່ຽວກັບແມ່ຍິງ ແລະ ຄົນງານຊົ່ວຄາວ, ພິຈາລະນາວ່າ ນັ້ນຊ່ວຍໃຫ້ເປີດປະຕູແຫ່ງໂອກາດອັນໃໝ່ ແລະ ຕ້ອງການການຜັກດັນໂດຍພາກນະໂຍບາຍ. ການເຂົ້າເຖິງການເງິນສໍາລັບທຸລະກິດໃໝ່ໆ ມີຜົນກະທົບດ້ານບວກຕໍ່ຊີວິດການເປັນຢູ່ທີ່ດີຂອງແມ່ຍິງ, ໄວໜຸ່ມ ແລະ ກຸ່ມຄົນທີ່ມີຄວາມສ່ຽງ, ເນື່ອງຈາກເຂົາເຈົ້າບໍລິຫານຈັດການເພື່ອປະທັງຊີວິດການເປັນຢູ່ ໂດຍຜ່ານການເກັບອອມ ແລະ ແນວຄິດທາງທຸລະກິດ ໃນຂະນະທີ່ມີລາຍຮັບເພື່ອຕອບສະໜອງຄວາມຈໍາເປັນຂອງເຂົາເຈົ້າ. ເພື່ອດຶງເອົາຄົນງານຊົ່ວຄາວ ອອກຈາກກັບດັກແຫ່ງຄວາມທຸກຍາກ ຍ້ອນວ່າເຂົາເຈົ້າສ່ວນຫຼາຍແມ່ນມີລາຍໄດ້ໜ້ອຍກວ່າໜຶ່ງໂດລາສະຫະລັດຕໍ່ມື້, ການເຂົ້າເຖິງການເງິນ ຈຶ່ງເປັນສິ່ງທີ່ສໍາຄັນ.

ອາທິດນີ້ ຈົບລົງດ້ວຍຄວາມເຂົ້າໃຈຕໍ່ກັບການອະພິປາຍຂອງໂລກກ່ຽວກັບນະໂຍບາຍ ຄວາມອ່ອນໄຫວຕໍ່ເພດ (gender-sensitive) ແລະ ການຕອບສະໜອງຕໍ່ເພດ (gender-responsive). ພວກເຮົານິຍາມ ຄວາມອ່ອນໄຫວຕໍ່ເພດ (gender-sensitive) ແລະ ການຕອບສະໜອງຕໍ່ເພດ (gender-responsive) ເພື່ອທໍາຄວາມເຂົ້າໃຈເຖິງຄວາມແຕກຕ່າງອີງຕາມຕົ້ນກໍາເນີດ ຫຼື

ທີ່ມາຂອງແນວຄວາມຄິດເຫຼົ່ານີ້. ອີກດ້ານໜຶ່ງ, gender sensitivity ແມ່ນກ່ຽວກັບການຍົກສູງຄວາມຮັບຮູ້ເອກະລັກທາງເພດ ແລະ ບົດບາດ ຫຼື ໂອກາດຂອງຜູ້ຊາຍ ແລະ ແມ່ຍິງ. ອີກແງ່ໜຶ່ງ, ການຕອບສະໜອງຕໍ່ເພດ (gender-responsive) ແມ່ນເວົ້າກ່ຽວກັບການຍົກສູງຄວາມຮັບຮູ້ນີ້ຄຽງຄູ່ໄປກັບການແກ້ໄຂຄວາມບໍ່ສະເໝີພາບທີ່ເກີດຈາກບັນດາບັນທັດຖານ, ບົດບາດ ແລະ ການພົວພັນທີ່ບໍ່ສະເໝີພາບຜ່ານທາງນະໂຍບາຍຕ່າງໆ ແລະ ວິທີການປະຕິບັດ.

ພວກເຮົາໄດ້ສຶກສາກໍລະນີຕ່າງໆຂອງປະເທດທີ່ມີນະໂຍບາຍ ຄວາມອ່ອນໄຫວຕໍ່ເພດ (gender-sensitive) ຫຼື ການຕອບສະໜອງຕໍ່ເພດ (gender-responsive). ໂດຍລວມແລ້ວ, ເພື່ອໃຫ້ມີນະໂຍບາຍ ແລະ ແນວທາງການປະຕິບັດກ່ຽວກັບຕະຫຼາດແຮງງານທີ່ຕອບສະໜອງຕໍ່ບົດບາດທາງເພດ, ເປັນສິ່ງສຳຄັນທີ່ຕ້ອງໄດ້ກຳນົດຊ່ອງຫວ່າງ ແລະ ການປະຕິບັດທີ່ແບ່ງແຍກໃນອະດີດ. ບັນດາປະເທດຍັງຈຳເປັນຕ້ອງໄດ້ມີການກຳນົດຄືນໃໝ່ ແລະ ນຳເອົາແນວທາງທີ່ຈຳເປັນໄປນຳໃຊ້ ເພື່ອປະໂຫຍດຂອງລູກຈ້າງຊົ່ວຄາວ ເຊິ່ງຖືວ່າເປັນກຳລັງແຮງງານສ່ວນໃຫຍ່ໃນປະເທດທີ່ກຳລັງພັດທະນາໃນທົ່ວໂລກ.